Washington State
Department of Social
& Health Services
Transforming lives

ທັນວາ 2023



# ການສະລະສິດ

## ສະລຸບຄວາມ

ການສະລະສິດ Children's Intensive In-home Behavioral Support ແມ່ນນຶ່ງຂອງຫ້າການສະລະສິດຂອງການບໍລິການຢູ່ຕາມເຮືອນ ແລະ ຊຸມຊົນຂອງຣັດຖະບານກາງຂອງ DSHS Developmental Disabilities Administration.

ການສະລະສິດ CIIBS ອູ້ມຊູເດັກນ້ອຍທີ່ມີການສ່ຽງສູງຕໍ່ການຈັດຫາໃຫ້ຢູ່ນອກເຮືອນຍ້ອນການປະພຶດທີ່ເປັນອັນຕະຣາຍແລະຊ່ວຍເຂົາເຈົ້າໃຫ້ອາສັຍຢູ່ໃນເຮືອນນຳຄອບຄົວຂອງເຂົາເຈົ້າຢ່າງເປັນຜົນສຳເຣັດ.ຈຸດເປົ້າຫມາຍແມ່ນເພື່ອຈະສົ່ງເສີມການອູ້ມຊູໃຫ້ຄອບຄົວແລະເຮັດໃຫ້ຄວາມສຳເຣັດຂອງລູກຂອງເຂົາເຈົ້າເຂັ້ມແຂງຂື້ນຢູ່ໃນເຮືອນຂອງຄອບຄົວແລະຊຸມຊົນ.

ການວາງແຜນການອູ້ມຊູສ່ວນບຸກຄົນໄດ້ຖືກອີງຕາມການຮ່ວມມືແລະຈາກທີມງານ. ທີມງານເດັກນ້ອຍແລະຄອບຄົວລວມເອົາສະມາຊິກຄອບຄົວ,ຫມູ່ເພື່ອນ,ຜູ້ບໍຣິການ, ພະນັກງານໂຮງຮຽນແລະຄົນສຳຄັນຄົນອື່ນໆໃນຊີວິດຂອງເດັກນ້ອຍແລະຄອບຄົວ. ການວາງແຜນກໍ່ສ້າງຄວາມເຂັ້ມແຂງແລະເຣັດວຽກໄປໃສ່ຜົນອອກມາຊຶ່ງຖືກໝຳທາງໂດຍຄອບຄົວ.

## ງົບປະມານ

ປະຣິມານຂອງການສະລະສິດ CIIBS ແມ່ນສູງເຖິງ 200 ຄົນ.ໃນປີຂອງຣັດ FY23, 167 ຄົນໄດ້ຖືກຮັບໃຊ້ໃນການສະລະສິດ CIIBS ດ້ວຍ ຄ່າໃຊ້ຈ່າຍໂດຍສະເລັ່ຽ $2,065 ຕໍ່ເດືອນ.

ການສະລະສິດໄດ້ຖືກຈຳກັດໃສ່ຄ່າໃຊ້ຈ່າຍສະເລັ່ຽຢູ່ໃນສະຖາບັນປິ່ນປົວປານກາງສຳລັບບຸກຄົນທີ່ມີຄວາມເສັ່ຽອີງຄະນຳມັນສະນອງດ້ວຍການບໍຣິການລວມໃສ່ກັນທີ່ຈຳເປັນເພື່ອຈະຕອບສະນອງຄວາມຕ້ອງການຂອງລູກຄ້າທີ່ຖືກປະເມີນຜົນ. DDA ບໍ່ສາມາດປະຕິເສດການບໍຣິການໃຫ້ບຸກຄົນຢູ່ໃນການສະລະສິດຍ້ອນການຂາດເຂີນເງີນທຶນ, ເພື່ອວ່າຄ່າໃຊ້ຈ່າຍຂອງການສະລະສິດຈະຖືກຄວບຄຸມນຳຢ່າງລະມັດລະວັງ.

## ເງື່ອນໄຂຮັບເອົາ

ລູກຄ້າຂອງ DDA ຜູ້ທີ່ມີອາຍຸ 8 ປີຫລື ແກ່ກວ່າແລະຕ່ຳກວ່າອາຍຸ 18 ປີສຳລັບລານຈົດຊື່ເບື້ອງຕົ້ນແລະຕ່ຳກວ່າ ອາຍຸ 21 ປີສຳລັບການຈົດຊື່ດຳເນີນຕໍ່ໄປແລະ:

- ສອດຄ່ອງນຳກົດເກນຄວາມເສັ່ຽອີງຄະຂອງ Social Security.
- ສອດຄ່ອງນຳກົດເກນຂອງຣະດັບຂອງການປິ່ນປົວທາງໂຮງພະຍາບານ.
- ສອດຄ່ອງນຳມາດຕະຖານຂອງຣາຍໄດ້ແລະຊັບສິນສຳລັບ Apple Health of Washington. (ອີງຕາມຣາຍໄດ້ແລະຊັບສິນຂອງລູກຄ້າ)
- ເປັນຄົນສັນຊາດ U.S. ຫລືຄົນອາສັຍຢູ່ຖືກຕ້ອງທີ່ມີຄຸນນະວຸດທິຣັດຖະບານກາງ.
- ມີການປະເມີນຜົນ DDA ແລະແຜນການບໍຣິການມຸ່ງສູນກາງໃສ່ບຸກຄົນທີ່ບັນຣະຍາຍວ່າສຸຂະພາບຂອງຜູ້ເຂົ້າຮ່ວມ,ຄວາມປອດພັຍແລະຄວາມຕ້ອງການໃນການແຕ່ງຕົວຈະໄດ້ຮັບໃນຊຸມຊົນ ແນວໃດ.
- ໄດ້ເຫັນພ້ອມທີ່ຈະຮັບເອົາການບໍຣິການຢູ່ເຮືອນແລະຊຸມຊົນແລະແບບຢ່າງຂອງການອອກການບໍຣິການ CIIBS ໃຫ້ເປັນທາງສຳລອງຕໍ່ການບໍຣິການຢູ່ໂຮງພະຍາບານ.
- ໄດ້ຖືກປະເມີນຜົນເບິ່ງການຈັດຫາໃຫ້ຢູ່ນອກເຮືອນທີ່ມີການສ່ຽງສູງ ຫລື ຮ້າຍແຮງຍ້ອນການປະພຶດທີ່ເປັນອັນຕະຣາຍກ່ອນການຈົດຊື່ເຂົ້າໃນ ໂຄງການ.
- ອາສັຍຢູ່ນຳຄອບຄົວຂອງເຂົາເຈົ້າ

ຕິດຕໍ່ຫາ: Ann Vasilev, *Chief, Office of Program and Policy Development* • Ann.Vasilev@dshs.wa.gov • 360-407-1567
ເພື່ອຣາຍຣະອຽດເພີ້ມເຕີມແວ່ປ້ຽມ: https://www.dshs.wa.gov/dda/

Washington State Department of Social & Health Services

*Transforming lives*

## ການປະຕິບັດງານການຮັບປະກັນຄຸນນະພາບ

### ຂ້າງນອກ

- Centers for Medicare and Medicaid Services.
- National Core Indicators Project.
- Office of the Washington State Auditor.
- Washington State Department of Health.

### ຂ້າງໃນ

- DDA Office of Program and Policy Development.
- DDA Office of Quality, Compliance and Training.
- DDA Office of Provider Compliance and Transition Quality Assurance.

## ອັດຕຣາຣາຄາ

ການບໍຣິການສະລະສິດໄດ້ຖືກເອົາໃຫ້ໂດຍຜູ້ໃຫ້ການບໍຣິການທີ່ມີສັນຍາແຕກຕ່າງກັນ ໄປຫລາຍໆບ່ອນຜູ້ຊຶ່ງວ່າອັດຕຣາຣາຄາຂອງເຂົາຈ້າແມ່ນຂຶ້ນນຳການບໍຣິການທີ່ຖືກສະເນີໃຫ້. ອັດຕຣາຣາຄາສາມາດຖືກພົບເຫັນໄດ້ຢູ່ທີ່ [https://www.dshs.wa.gov/altsa/management- services-division/office-rates-management](https://www.dshs.wa.gov/altsa/management-services-division/office-rates-management)

## ເພື່ອນຮ່ວມງານ

- ບຸກຄົນຮັບເອົາການບໍຣິການ.
- ຄອບຄົວຂອງຜູ້ເຂົ້າຮ່ວມຂອງໂຄງການ.
- DSHS' Aging and Long-Term Support Administration.
- Washington State Department of Children, Youth, and Families.
- The Arc of Washington State.
- Office of the Developmental Disabilities Ombuds.
- Disability Rights Washington.
- ຜູ້ໃຫ້ການບໍຣິການ
- Washington State Developmental Disabilities Council.

## ການບໍຣິການລວມເອົາ:

- ເທັກໂນໂລຈີຊ່ວຍເຫລືອ.
- ການປັບຕົວເຂົ້ານຳສະພາບແວດລ້ອມ.
- ການບຳບັດພຶຕິກັມ.
- ການບຳບັດດ້ວຍດົນຕຣີ.
- ການແຕ່ງຕັ້ງນາຍພະຍາບານ.
- ການໃຫ້ຄຳປຶກສາຫມູ່ເພື່ອນ.
- ການອຳນວຍຄວາມສະດວກແຜນການມຸ່ງສູນໃສ່ບຸກຄົນ.
- ການຢຸດພັກຊົ່ວຄາວ.
- ການປະເມີນຜົນເບິ່ງການສ່ຽງອັນຕະຣາຍ.
- ເຄື່ອງນຸ່ງພິເສດສະເພາະ.
- ອຸບປະກອນແລະເຄື່ອງໃຊ້ພິເສດສະເພາະ.
- ການ ແຕ່ງຕົວນຸ່ງເຄື່ອງພິເສດສະເພາະ.
- ການບໍຣິການເຮັດໃຫ້ຫຸ່ມທ່ຽງ – ການ ແຕ່ງຕົວນຸ່ງເຄື່ອງພິເສດສະເພາະ.
- ການບໍຣິການເຮັດໃຫ້ຫຸ່ມທ່ຽງ – ການປຶກສານຳພະນັກງານແລະຄອບຄົວ.
- ການບໍຣິການເຮັດໃຫ້ຫຸ່ມທ່ຽງຕຽງນອນແກ້ໄຂພາວະສຸກເສີນ.
- ການປຶກສານຳພະນັກງານແລະ ຄອບຄົວ.
- ການປັບຕົວນຳການບຳບັດ.
- ການຂົນສິ່ງໄປມາ.
- ການດັດແປງຍານພາຫານະ.

## ສິດອຳນາດ

- ງົບປະມານເງິນທຶນຈາກຣັດຖະບານກາງພາຍໄຕ້ section 1915c of the Social Security Act, ການສະລະສິດຢູ່ຕາມເຮືອນແລະຊຸມຊົນແລະເງິນທຶນຂອງຣັດ.
- [Chapter 71A RCW](Chapter 71A RCW), ຄວາມເສັຽອົງຄະທາງການຈະເຣີນເຕີບໂຕ.
- [Chapter 388-845 WAC](Chapter 388-845 WAC), ການສະລະສິດໃນການບໍຣິການຢຕາມເຮືອນແລະຊຸມຊົນຂອງ DDA.